22100567

International Baccalaureate®
Baccalauréat International
Bachillerato Internacional

**LAO A1 – STANDARD LEVEL – PAPER 1**
**LAO A1 – NIVEAU MOYEN – ÉPREUVE 1**
**LAOSIANO A1 – NIVEL MEDIO – PRUEBA 1**

Thursday 13 May 2010 (afternoon)
Jeudi 13 mai 2010 (après-midi)
Jueves 13 de mayo de 2010 (tarde)

1 hour 30 minutes / 1 heure 30 minutes / 1 hora 30 minutos

---

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a commentary on one passage only. It is not compulsory for you to respond directly to the guiding questions provided. However, you may use them if you wish.

INSTRUCTIONS DESTINÉES AUX CANDIDATS

- N'ouvrez pas cette épreuve avant d'y être autorisé(e).
- Rédigez un commentaire sur un seul des passages. Le commentaire ne doit pas nécessairement répondre aux questions d'orientation fournies. Vous pouvez toutefois les utiliser si vous le désirez.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un comentario sobre un solo fragmento. No es obligatorio responder directamente a las preguntas que se ofrecen a modo de guía. Sin embargo, puede usarlas si lo desea.


© International Baccalaureate Organization 2010

https://xtremepape.rs/

ໃຫ້ເຈົ້າວິຈານ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້

**1.**

ລົມໜາວເລີ່ມພັດຜ່ານມາເບົາໆ

ກິ່ນເຂົ້າເປືອກຫອມມາໃສ່ດັງ

ທົ່ງນາຍາມເກັບກ່ຽວເປັນສີເຫຼືອງອາລ່າມ ກິ່ນດິນແລະຕໍເຟືອງເລົ້າໂລມເຂົ້າຮອດຂ້າງໃນຫົວໃຈ ແຕ່...ຈະເຮັດແນວໃດໄດ້...ບັກຫຸ່ນໄລ່ກາຍັງຢືນວາແຂນທົ່ງຫວງແມ່ນກະທັ້ງເສດເຫຼືອເມັດເຂົ້າເປືອກ...ເພື່ອເຂົ້າເປືອກພຽງບໍ່ເທົ່າໃດເມັດນັ້ນ ເພື່ອນຂອງຂ້ອຍຈຳນວນບໍ່ໜ້ອຍຖືກຈັບກຸມແລະເຂັ່ນຂ້າ ແລ້ວຂ້ອຍກໍຈຳເປັນຈຳໃຈໜີຈາກທ້ອງທົ່ງນາທີ່ເຫຼືອງອາລ່າມແລະຫອມອູດເອົ້າດ້ວຍກິ່ນເຟືອງແລະເສດເຂົ້າເປືອກນັ້ນມາ

ຕາມກິ່ງງ່າສາຂາຕົ້ນດອກຈຳປາຕົ້ນຝາງແດງແລະອີກຫຼາຍໆຕົ້ນ ຂ້ອຍຄິດດົ້ນປິ້ນໄປສັບຕອດໄປພໍໃຫ້ທ້ອງມີອາຫານເບື່ອງໃດເບື່ອງໜຶ່ງຮອງໄວ້ ເຖິງໜ້ອຍກໍຍັງດີ ຊາວນາບໍ່ໜ້າຈະແລ້ງນ້ຳໃຈ... ຢ່າງນ້ອຍຍາມເຂົ້າຂຽວເຕັມນາ ຂ້ອຍຍັງໄດ້ຊ່ອຍຂ້າສັດຕູພືດ ບາດໄດ້ເຂົ້າເປັນກຳເປັນຮວງແລ້ວ ຊ້ຳພັດລືມຄຸນທັງໄລ່ໜີຕີສິ່ງ

ບັ້ງຕົວນ້ອຍໆຕົວໜຶ່ງ... ໄຕ່ມາ ນ້ອຍຫຼືໃຫຍ່... ບໍ່ມີຫຍັງສຳຄັນແລ້ວໃນຍາມຫອດຫິວເຊັ່ນນີ້

ຂ້ອຍຈະກິນມັນໃຫ້ໝົດ... ເພື່ອຢູ່ລອດເທົ່ານັ້ນ

ທ່າຮີດມັນ ເດັກນ້ອຍຈັ່ງໄຮເສືອກມາພົບຈົນໄດ້... ຖ້າຫຼົບລູກກະກຸນເອົາບໍ່ທັນ... ມີຫວັງຫຍິງແອ້ວໃສ່ນ້ຳໜາກພ້າວໜີຈາກທ້ອງທົ່ງນາມາ... ໜີແຮວມາລອດ ຄືດວ່າຊິປອດໄພ... ໃນບ້ານໃນເມືອງຄົນແທ້ໆ... ບັ້ງຕົວນ້ອຍໆຕົວດຽວກໍຫາກິນບໍ່ມີ... ແລ້ວພວກລູກໆທີ່ຖ້າຢູ່ຮັງນັ້ນເດ... ບໍ່ແມ່ນມັນພາກັນຫິວຕາຍໝົດແລ້ວບໍ່

ບິນຈາກກົກຈຳປາ... ຂ້ອຍກໍບິນສູງຂຶ້ນໄປກວ່າເກົ່າ

ມາຈັບຢູ່ສາຍໄຟຟ້ານີ້ ຄືຈະຫວິດລູກຫີນມົນໆນັ້ນແລ້ວ ຟັງແມ້! ໃຈຍັງດັ້ນແດັກໆຢູ່ ອົນກໍຈົນໂປດໄປ ເກືອບໄປແລ້ວເຮົາ ພັກຢູ່ນີ້ລະ... ບາງທີມີແມງໄມ້ຈັກໂຕບິນຜ່ານມາ ໂຊກດີຈະເປັນຂອງເຮົາ... ໄດ້ໂຕໃຫຍ່ໆກໍໄຄ... ພວກລູກໆທີ່ຖ້າຢູ່ຮັງຈຶ່ງຊິພໍກັນກິນ

ທ້ອງຟ້າມື້ນີ້ເປັນສີຄາມ

ແດດເຫຼືອງງາມເຕັມທ້ອງຟ້າ... ສາຍລົມຍາມຕອນຕົ້ນລະດູໜາວພັດມາຄ່ອຍໆ... ໂລກນີ້ໜ້າຢູ່ແທ້ ຖ້າທ້ອງບໍ່ໂຄ່ງ ລູກໆບໍ່ຄອຍຖ້າອາຫານ ຂ້ອຍຈະຮ້ອງເພງມ່ວນໆກ່ອມໂລກທີ່ໜ້າຮັກໜ່ວຍນີ້...

ດັບ!!!

ຂ້ອຍຈື່ໄດ້ດີ... ມັນແມ່ນສຽງປືນລົມ

ຊ້າເກີນໄປເສຍແລ້ວ... ເລືອດສີແດງເຂັ້ມປຽກຊຸ່ມໄປທົ່ວໜ້າເອິກຂົນອ່ອນໆຂອງຂ້ອຍ... ຂ້ອຍເຈັບປວດ... ວິນວຽນ... ຂ້ອຍໂຫວ້ຍລົງ ທັ້ງໆທີ່ຕາຍັງເບີກກວ້າງ... ຕີນທີ່ມີເລັບແຫລມຂອງຂ້ອຍຍັງເກາະຢູ່ກັບສາຍໄຟ... ຂ້ອຍແຫງນໜ້າເບິ່ງທ້ອງຟ້າສີຄາມອີກເທື່ອໜຶ່ງ... ມັນຈະເປັນເທື່ອສຸດທ້າຍທີ່ຂ້ອຍຈະໄດ້ເຫັນໂລກທີ່ໜ້າຢູ່ນີ້... ແລ້ວໃຜນໍຈະໄດ້ນຳຂ່າວຮ້າຍນີ້ໄປບອກລູກໆ... ແລ້ວໃຜນໍຊິຊອກເມັດເຂົ້າເປືອກແລະບົ້ງໄປປ້ອນປາກຈອກຫວອກນ້ອຍໆເຫລົ່ານັ້ນ... ມະນຸດເອີຍ... ຊີວິດນ້ອຍໆທີ່ບໍ່ເປັນພິດໄພແກ່ໃຜ ຂໍຢູ່ຮ່ວມໂລກນຳດ້ວຍ...

ບຸນທະນອງຊົມໄຊພົນ ມະນຸດເອີຍຂ້າຜູ້ນ້ອຍຂໍທາຍໃຈນຳແດ່ ໃນ *ຂ້າຜູ້ນ້ອຍຂໍທາຍໃຈນຳແດ່* ວຽງຈັນ: ໂຮງພິມໜຸ່ມລາວ (2000)



https://xtremepape.rs/

– ຜູ້ຂຽນເຮັດແນວໃດເພື່ອຈະຊັກຈູງອາລົມຂອງຜູ້ຂຽນ

– ໃຫ້ເຈົ້າວິຈານຈຸດດີແລະຈຸດອ່ອນຂອງເລື່ອງ

– ຜູ້ຂຽນສະເໜີຫົວຂໍ້ຫຼັກຂອງເລື່ອງນີ້ແນວໃດແດ່



https://xtremepape.rs/

**2.**

ຍາມນີ້　ເດືອນເຈັດລາວເລີ່ມເຂົ້າ　　ເປັນການບອກຍາ
ບາງຜ່ອງຫາກກະກ່ຽມ　　ຄາດໄຖແຮໄວ້
ຜ່ອງເລືອກເອົາແນວເຂົ້າ　　ກະກ່ຽມລົງແຊ່
ທັງແຮ ຊຸມໜື່ງໄວ້　　ເພາະຝົນຟ້າບໍ່ຄົ່ງໃຈ

ກໍາຝ່າຍຊາຍໝຸ່ມແໜ້ນ　　ຜູ້ແຂງແກ່ນກະທໍານາ
ຍັງເຝົ້າ ລໍຄອຍຫາ　　ເພື່ອນຍິງຜູ້ໄກບ້ານ
ໄປເຮັດການໃນເມືອງກວ້າງ　ນະຄອນຫຼວງບໍ່ທັນຕາວ
ສາວນາງແພງບອກໄວ້　　ຍາມນາພຸ້ນຈັ່ງຊິມາ ວ່ານາ

ແຕ່ຊາຍຄອງຢູ່ຖ້າ　　ບໍ່ໄດ້ຂ່າວຄາວຫຍັງ
ຊາຍຍັງຄອງຄວາມຄິດ　ວ່າບໍ່ດົນຕ້ອງມາແທ້
ແຍງແຕ່ແພມົນນ້ອຍ　　ຂອງນາງມອບຕອບຈາກ
ຫຼືໃຈນາງຫາກປ່ຽນປີ້ນ　ຊົມຊ້ອຍຊື່ນເມືອງ ແລ້ວບໍ

ຊາຍແນມ ລົງທົ່ງກວ້າງ　ຮື້ໄຖໄວ່ເປັນຜົງ
ຝົນບໍ່ລົງຮວາຍຮໍາ　　ຮວາດໂຮຍນາກວ້າງ
ຄົນທັງປວງຍັງຄອຍຟ້າ　ນາຍັງຄອຍຝົນຕົກໃສ່
ເໝືອນໃຈຊາຍດົ່ນດົ້ນ　　ຄອຍນ້ອງຕ່າວຄືນ

ບໍ່ຢາກໄຫ້ແຕ່ໃຈຫາກສະອື້ນ　ຄືນຄໍ່າຄອຍຫາ
ຄອຍຝົນຕົກຮໍານາ　　ດັ່ງບ່າວນາຄອຍນ້ອງ
ຫຼືວ່າທອງຄໍາແກ້ວ　　ກໍ່ຄອຍຝົນໂດຍດັ່ງ ກັນບໍ
ຍາມຝົນລົງຫຼັ່ງທົ້ນ
ຈັ່ງຊິຄືນສູ່ຫ້ອງ　　ນາກວ້າງແກ່ວເຄີ່ມ ວ່າລີ

ຄັນວ່າເປັນຈັ່ງຊັ້ນ　　ກໍ່ຫາກແມ່ນບຸນຫຼາຍ
ຫົວໃຈຊາຍຍັງໂຫຍຫວນ　ດັ່ງນາບໍ່ມີນໍ້າ
ໃຫ້ນ້ອງຫຼິງເຖິງກໍາ້　　ແດນນາພຸ້ນແດ່
ບໍ່ເຫັນໃຈອ້າຍຜູ້ແຫຼ້　　ຢ້ານຕາຍແທ້ເຄິ່ງຄືງ ແທ້ແລ້ະ

ຮົ່ມໂພທອງ ໝຸ່ມຄອຍຖ້າເໝືອນນາຄອຍຝົນ ໃນ *ວາດກະວີ* ບັນນາທິການ: ທອງໃບໂພທິສານ ວຽງຈັນ: ວັນນະສິນ (2003)

– ການປຽບທຽບຝົນກັບຄວາມຮັກໃນເລື່ອງນີ້ມີຄວາມໝາຍແລະຄວາມສໍາຄັນແນວໃດ

– ໃຫ້ເຈົ້າວິຈານຫົວຂໍ້ທີ່ສໍາຄັນຂອງເລື່ອງນີ້

– ໃຫ້ເຈົ້າວິຈານວັນນະສິນກະວີໃນເລື່ອງນີ້



https://xtremepape.rs/